ໜ່ວຍງານຝຶກອົບຮົມສົ່ງເສີມກະສິກຳ
- 632.94
1191

ແບບຮຽນເພື່ອການພັດທະນາ
ຄວາມຊຳນານໃນການຜະລິດເຂົ້າ
Rice Production
Skills Development Series



# ຂັ້ນຕອນການນຳໃຊ້ ບັ້ງສີດຢາດ້ວຍມື

# Operating a Knapsack Sprayer

ກົມປູກຝັງ ແລະ ສົ່ງເສີມການກະເສດ
ໂຄງການ ລາວ-ອີຣີ
DEPARTMENT OF AGRICULTURE
AND EXTENSION
LAO-IRRI PROJECT

# ຂັ້ນຕອນການນຳໃຊ້

# ບັ້ງສີດຢາດ້ວຍມື

# Operating a Knapsack Sprayer

ກົມປູກຝັງ ແລະສົ່ງເສີມການກະເສດ
ໂຄງການ ລາວ-ອີຣີ
DEPARTMENT OF AGRICULTURE
AND EXTENSION
LAO-IRRI PROJECT
1992

## ລະບຽບການ

ບົດຮຽນບົດນີ້ໄດ້ອະທິບາຍກ່ຽວກັບຂັ້ນຕອນການນຳໃຊ້ບັ້ງສີດຢາດ້ວຍມືຢ່າງຖືກຕ້ອງ.

## ເຫດຜົນ

ບັ້ງສີດຢາດ້ວຍມືແມ່ນອຸປະກອນທີ່ສຳຄັນອັນນຶ່ງໃນການຜະລິດເຂົ້າ. ຕາມປົກກະຕິແລ້ວຢາຂ້າແມງໄມ້ຊະນິດຝຸ່ນ ແລະຊະນິດນ້ຳຈະມີລາຄາຖືກກ່ວາຊະນິດເມັດ. ເຖິງຢ່າງໃດກໍຕາມການນຳໃຊ້ຢາເຫລົ່ານີ້ແມ່ນມີຄວາມຕ້ອງການກ່ຽວກັບອຸປະກອນການສີດຢາປາບສັດຕູເຂົ້າ ເພື່ອໃຫ້ໄດ້ຮັບຜົນດີ. ສະນັ້ນຊາວນາ ຄວນຈະຮູ້ວິທີນຳໃຊ້ ບັ້ງສີດຢາດ້ວຍມືຢ່າງຖືກຕ້ອງ.

## ຈຸດປະສົງ

ເມື່ອໄດ້ຮຽນຮູ້ກ່ຽວກັບບົດຮຽນບົດນີ້ ທ່ານຈະສາມາດນຳໃຊ້ບັ້ງສີດຢາດ້ວຍມືໄດ້ຢ່າງຖືກຕ້ອງ.

ອຸປະກອນຕ່າງໆ:

- ບົ້ງສີດຢາດ້ວຍມື.
- ກີບໄມ້ໄຜ່ ຈຳນວນ 6 ອັນ ຂະໜາດ
  1 x 2.5 x 100 ຊຕມ.
- ກົ້ເຊືອກ ຍາວ 35 ມ.
- ນ້ຳສະອາດເພື່ອຕື່ມໃສ່ຖັງ.
- ໂມງຈັບເວລາ.



## ຂັ້ນຕອນຕ່າງໆ

1. ນຸ່ງເຄື່ອງໃຫ້ຖືກຕ້ອງ.

ໃສ່ຊຸບມື, ນຸ່ງສົ້ງເສື້ອຄູມຕົວຂອງທ່ານໄວ້ ແລະໃສ່ເກີບ. ຈົ່ງອັດປາກ ແລະດັງຂອງທ່ານດ້ວຍເຄື່ອງອັດປາກ ແລະດັງ.



## 2. ກະກຽມບັ້ງສີດ

ຕິດຕັ້ງປ້ຳ ແລະສິ້ນສ່ວນອື່ນໆ ໃສ່ຖັງບັ້ງສີດ. ກວດກາ ເພື່ອໃຫ້ແນ່ໃຈວ່າ ຝາອັດຮູຖັງ, ຄັນຈັບ ແລະຫົວສີດຢູ່ໃນສະພາບດີ ແລະກຽວທັງຫມົດຖືກຫັນແຫນ້ນດີ.



3. ເອົານ້ຳໃສ່ຖັງໃຫ້ໄດ້ 3/4 ສ່ວນ.

ກວດກາເບິ່ງເຄື່ອງຕອງທີ່ຢູ່ໃນຖັງ. ຖອກນ້ຳ
ສະອາດໃສ່ຖັງໃຫ້ໄດ້ປະມານ 3/4 ຂອງຖັງ.



4. ຫັນກຣວຝາປິດໃຫ້ແໜ້ນ.



5. ພາຍບັ້ງສີດໃສ່ຫລັງ.

ເອົາບັ້ງສີດຂຶ້ນເປີ້ໃສ່ຫລັງແລະຣັດສາຍ
ພາຍໃຫ້ແໜ້ນຕິດກັບບ່າ.



## 6. ເພີ້ມຄວາມດັນເຂົ້າໄປໃນຖັງ.

ອີງຕາມຂໍ້ແນະນຳ, ປັ້ມລົມເຂົ້າຖັງດ້ວຍຄັນມື
ຖືຫລາຍໆຄັ້ງ. ໃຫ້ກວດກາເບິ່ງການຮົ່ວຊືມ
ໃນຂະນະທີ່ສູບລົມເຂົ້າຖັງ.



## 7. ທົດລອງສີດເບິ່ງ.

ຈັບຄັນຫົວສີດໃຫ້ສູງຈາກຫນ້າດິນປະມານ 30 ຊຕມ. ແລະປິ່ນຫົວສີດລົງໃສ່ດິນ.



ກົດຫລືບີບສະວິກປິດ - ເປີດ ແລະສັງເກດ
ເບິ່ງວ່າ ມັນຟຸ້ງກະຈາຍໄປໄດ້ດີ ແລະ
ສະຫມ່ຳສະເຫມີບໍ່.



ຖ້າຈຳເປັນ ໃຫ້ປັບຫົວສີດໂດຍການຫັນເຂົ້າຫລື
ມາຍອອກ. ຖ້າວ່າຫົວສີດຕັນກໍຈົ່ງເອົາອອກມາ
ທຳຄວາມສະອາດ.



## 8. ຮັກສາຄວາມດັນໃຫ້ປົກກະຕິ.

ດຶງປ້ຳຄັນຫງັດ ດ້ວຍຈັງຫວະ ປົກກະຕິ ແລະ ປ້ຳຄວາມດັນເຂົ້າໄປໃນຖັງຕື່ມອີກເມື່ອນ້ຳຢາ ໜ້ອຍລົງ ເພື່ອຮັກສາຄວາມດັນໃນຖັງໃຫ້ສະໝ່ຳສະເໝີ.



## 9. ຮັກສາລະດັບຄວາມໄວບາດຍ່າງໃຫ້ສະໝໍ່າສະເໝີ

ຍ່າງດ້ວຍຄວາມໄວປົກກະຕິ ພ້ອມກັບມືເບື້ອງນຶ່ງປ້ຳ
ແລະ ອີກເບື້ອງນຶ່ງຄວບຄູມຄັນສີດ.



10. ຮັກສາໄລຍະຄວາມຫ່າງລະຫວ່າງຫົວສີດ
ແລະ ຕົ້ນພືດໃຫ້ປົກກະຕິ ຄືໃຫ້ຢູ່ໃນລະ
ຫວ່າງ 30 ຊຕມ.



## 11. ຮັກສາໄລຍະຄວາມກ້ວາງຂອງເນື້ອທີ່ສີດໃຫ້ປົກກະຕິ

ໄລຍະຄວາມກ້ວາງໃນການສີດ ຄືເນື້ອທີ່ການສີດຢາໃນທຸກໆບາດຍ່າງ. ຮັກສາໄລຍະຄວາມກ້ວາງໃນການສີດ ເມື່ອເວລາແກວ່ງຫົວສີດຈາກຂ້າງນຶ່ງໄປຫາຂ້າງນຶ່ງໃຫ້ສະຫມ່ຳສະເຫມີ.



**ບັນຫາເຈາະຈີ້ມເພີ້ມ**

1. **ໃຫ້ອະທິບາຍວ່າ : ການຮັກສາລະດັບຄວາມໄວຂອງບາດຍ່າງ ແລະຮັກສາໄລຍະຄວາມຫ່າງລະຫວ່າງຫົວສີດ ແລະຍອດພືດນັ້ນ, ມັນກະທົບຕໍ່ການກະຈາຍຂອງນ້ຳຢາແນວໃດ.**

ການຮັກສາຄວາມໄວຂອງການຍ່າງແລະຮັກສາໄລຍະຄວາມຫ່າງລະຫວ່າງຫົວສີດແລະຍອດພືດໃຫ້ຄົງທີ່ນັ້ນກໍເພື່ອເຮັດໃຫ້ການສີດນັ້ນສະໝ່ຳສະເໝີແນ່ນອນແລະຕິງຕໍ່ເວລາ. ຄວາມໄວຂອງການຍ່າງຫລືລະຍະຄວາມຫ່າງລະຫວ່າງຫົວສີດ ແລະຍອດພືດທີ່ມີຄວາມແຕກຕ່າງກັນນັ້ນຈະເປັນສາເຫດເຮັດໃຫ້ການຟຸ້ງກະຈາຍຂອງນ້ຳຢາບໍ່ສະໝ່ຳສະເໝີ.

2. **ທ່ານຈະຮູ້ໄດ້ແນວໃດວ່າຄວາມດັນທີ່ຢູ່ໃນຖັງບັ້ງສີດນັ້ນມີພຽງພໍຫລືບໍ່ ?**

ຖ້າວ່າຄວາມດັນທີ່ຢູ່ໃນບັ້ງສີດນັ້ນມີພຽງພໍ ຢົດນ້ຳຢາທີ່ອອກມາຈາກຫົວສີດນັ້ນ ຈະອອກມາປົກກະຕິເປັນເມັດຝອຍໜ້ອຍໆ ແລະສະໝ່ຳສະເໝີ.

**ການປະເມີນຜົນ.**

1. ຈົ່ງຈັດລຽງລະດັບຂັ້ນຕອນຂອງການນຳໃຊ້ບັ້ງສີດຢາດ້ວຍມື.
2. ຈົ່ງສາທິດວິທີປະຕິບັດນຳໃຊ້ບັ້ງສີດຢາດ້ວຍມືໃນເນື້ອທີ່ 20 ຕາແມັດ ຢູ່ໃນໄຮ່ນາໃຫ້ຖືກຕ້ອງ.

ພິມທີ່ ໂຮງພິມວຽງຈັນ